ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ກົມລ້ຽງສັດ ແລະ ການປະມົງ

ເລກທີ ...0735.../ກລປ.

ທີ່ນະຄອນຫຼວງວຽງຈັນ, ວັນທີ 10 APR 2013

## ແຈ້ງການ

**ເຖິງ: ທ່ານຫົວໜ້າຂະແໜງລ້ຽງສັດ ແລະ ການປະມົງແຂວງ ແລະ ນະຄອນຫຼວງວຽງຈັນ**

**ເລື່ອງ: ໃຫ້ເອົາໃຈໃສ່ເຝົ້າລະວັງ ແລະ ສະກັດກັ້ນພະຍາດໄຂ້ຫວັດສັດປີກ.**

- ອີງຕາມ ຂໍ້ຕົກລົງ ຂອງລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກົມລ້ຽງສັດ ແລະ ການປະມົງ, ສະບັບເລກທີ 1895/ກປ, ລົງວັນທີ 10 ສິງຫາ 2012.
- ອີງຕາມ ກົດໝາຍວ່າດ້ວຍການລ້ຽງ ແລະ ການສັດຕະວະແພດ ສະບັບເລກທີ 03/ສພຊ, ລົງວັນທີ 25/07/2008.
- ອີງຕາມ ການລາຍງານ ຂອງອົງການພະຍຸສັດສາກົນ (OIE) ກ່ຽວກັບການລະບາດຂອງພະຍາດໄຂ້ຫວັດສັດປີກ H7N9 ຢູ່ປະເທດໃກ້ຄຽງ ໃນຊ່ວງເດືອນ ເມສາ 2013.

ພະຍາດໄຂ້ຫວັດສັດປີກ ໄດ້ລະບາດຢູ່ປະເທດລາວ ຄັ້ງທຳອິດ ໃນຕົ້ນປີ 2004 ແລະ ໄດ້ເກີດຂຶ້ນຢ່າງຕໍ່ເນື່ອງ ຢູ່ໃນບາງທ້ອງຖິ່ນຂອງປະເທດເຮົາ ຊຶ່ງໄດ້ພົບການລະບາດຄັ້ງສຸດທ້າຍໃນຕົ້ນປີ 2009 ນັບແຕ່ນັ້ນມາພະຍາດນີ້ ກໍ່ໄດ້ສະຫງົບລົງ ແລະ ບໍ່ມີລາຍງານການລະບາດຂອງພະຍາດດັ່ງກ່າວຕື່ມອີກ.

ໃນວັນທີ 04 ເມສາ 2013 ອົງການພະຍຸສັດສາກົນ (OIE) ໄດ້ລາຍງານກ່ຽວກັບ ສະພາບການລະບາດຂອງພະຍາດໄຂ້ຫວັດສັດປີກ H7N9 ທີ່ເກີດ ຢູ່ ສ ປ ຈີນ, ຊຶ່ງລາຍງານວ່າມີການຕິດແປດຂອງພະຍາດສູ່ຄົນ 24 ຄົນ ແລະ ມີຄົນເສຍຊີວິດ 07 ຄົນ ຕໍ່ກັບບັນຫາດັ່ງກ່າວ ສ ປ ປ ລາວ ກໍ່ອາດມີຄວາມສ່ຽງ ທີ່ຈະເລັດລອດເຂົ້າມາໄດ້ ຍ້ອນວ່າ ມີຊາຍແດນຕິດຈອດກັບປະເທດເຮົາ ແລະ ເພື່ອເປັນການປ້ອງກັນບໍ່ໃຫ້ພະຍາດດັ່ງກ່າວ ແຜ່ລະບາດເຂົ້າມາໃນ ສ ປ ປ ລາວ ໄດ້ ຈຶ່ງຈຳເປັນຕ້ອງມີມາດຕະການ ໃນການປ້ອງກັນ ແລະ ສະກັດກັ້ນ ຢ່າງເຂັ້ມງວດ:

ຫົວໜ້າກົມລ້ຽງສັດ ແລະ ການປະມົງ ຈຶ່ງອອກແຈ້ງການດັ່ງນີ້:

1. ໃຫ້ຫົວໜ້າຂະແໜງລ້ຽງສັດ ແລະ ການປະມົງ ປະສານສົມທົບກັບຂະແໜງການສາຍຕັ້ງຂອງຕົນ ໃນຂັ້ນເມືອງ, ສັດຕະວະແພດບ້ານ, ຂະແໜງການກ່ຽວຂ້ອງ ເຊັ່ນ: ອົງການຈັດຕັ້ງມະຫາຊົນ ແລະ ອົງການປົກຄອງທ້ອງຖິ່ນ ສືບຕໍ່ລົງເຄື່ອນໄຫວຕິດຕາມ, ກວດກາ ແລະ ເຝົ້າລະວັງການລະບາດ ຂອງພະຍາດໄຂ້ຫວັດສັດປີກ ໃນການລ້ຽງສັດປີກແບບຄອບຄົວ, ແບບເປັນກຸ່ມ ຫຼື ແບບເປັນຟາມ.
2. ໃຫ້ແນະນຳ ໃຫ້ຜູ້ປະກອບການ ຕະຫຼອດຮອດປະຊາຊົນບັນດາເຜົ່າ ເອົາໃຈໃສ່ປະຕິບັດຫຼັກການປ້ອງກັນພະຍາດໄຂ້ຫວັດສັດປີກ ດ້ວຍລະບົບຄວາມປອດໄພທາງຊີວະທີ່ດີ ແລະ ຕິດຕາມສຸຂະພາບສັດ ຂອງຕົນຢ່າງໃກ້ຊິດ,

ຫາກພົບເຫັນສັດປີກຂອງຕົນ ເຈັບ ຫຼື ຕາຍ ໂດຍບໍ່ຮູ້ສາຍເຫດ ໃຫ້ຮີບຮ້ອນລາຍງານ ຕໍ່ສັດຕະວະແພດບ້ານ ຫຼື ນາຍບ້ານໂດຍດ່ວນ ເພື່ອຫາວິທີແກ້ໄຂ, ລາຍງານ ໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ແລະ ແຂວງ ພ້ອມທັງແນະນຳ ບໍ່ໃຫ້ນຳເອົາສັດປີກ ແລະ ສິ້ນສ່ວນຂອງສັດປີກ ທີ່ຕາຍນັ້ນໄປປຸງແຕ່ງອາຫານ ຫຼື ນຳໄປຈຳໜ່າຍຢ່າງເດັດຂາດ.

3. ໃນກໍລະນີສົງໄສສັດປີກ ເຫົງາ ຫຼື ຕາຍ ຍ້ອນພະຍາດໄຂ້ຫວັດສັດປີກ ໂດຍມີອັດຕາການຕາຍສະສົມສູງ ເຖິງ 40% ໃນໄລຍະ 03 ວັນ ຫຼື ຜົນບວກໃນການທົດສອບແບບໄວ ໂດຍບໍ່ລໍຖ້າ ຜົນຂອງການວິໄຈຈາກຫ້ອງວິໄຈພະຍາດສັດສູນກາງ, ໃຫ້ເຮັດອະນາໄມຂ້າເຊື້ອໃນບໍລິເວນອ້ອມຮອບຢ່າງທົ່ວເຖິງ ແລະ ບໍ່ໃຫ້ເຄື່ອນຍ້າຍສັດປີກໃນເຂດນັ້ນ ໃນວົງລັດສະໝີ 0,5 ກິໂລແມັດ, ພ້ອມນັ້ນກໍ່ໃຫ້ເກັບຕົວຢ່າງສົ່ງໄປກວດວິໄຈ ເພື່ອຢັ້ງຢືນເຊື້ອພະຍາດ, ກໍລະນີໄດ້ຮັບການຢືນຢັນຈາກຫ້ອງວິໄຈ ວ່າພົບເຊື້ອພະຍາດໄຂ້ຫວັດສັດປີກ ຕ້ອງປະຕິບັດຕາມຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້ ວ່າດ້ວຍການອະນຸມັດນຳໃຊ້ມາດຕະຖານ ແລະ ຂັ້ນຕອນປະຕິບັດ ການຄວບຄຸມການລະບາດ ຂອງພະຍາດໄຂ້ຫວັດສັດປີກ ສະບັບເລກທີ 0064/ກປ, ລົງວັນທີ 16 ມັງກອນ 2012 ຢ່າງເຂັ້ມງວດ.

4. ສຳລັບ ແຂວງທີ່ມີຊາຍແດນຕິດຈອດກັບປະເທດໃກ້ຄຽງ ໂດຍສະເພາະ ສປຈີນ ໃຫ້ຕິດຕາມກວດກາ ການນຳເຂົ້າສັດປີກ ແລະ ຜະລິດຕະພັນສັດປີກທຸກຊະນິດ ຕາມດ່ານຕ່າງໆ ຫຼື ຊາຍແດນຢ່າງເຄັ່ງຄັດ, ອະນຸຍາດໃຫ້ມີການນຳເຂົ້າສະເພາະສັດປີກ ຫຼື ຜະລິດຕະພັນສັດປີກ ທີ່ມີໃບຢັ້ງຢືນຮັບຮອງໂດຍອົງການສັດຕະວະແພດຂອງລັດຈາກປະເທດຕົ້ນທາງ ຢ່າງເປັນທາງການ ວ່າປອດຈາກພະຍາດໄຂ້ຫວັດສັດປີກ.

5. ໃຫ້ແຕ່ງຕັ້ງພະນັກງານ ສັດຕະວະແພດ ເພື່ອລົງກວດກາ ຕິດຕາມ ຕາມສະຖານທີ່ຕ່າງໆ ເຊັ່ນວ່າ: ເສັ້ນທາງ ຫຼື ດ່ານທີ່ມີການນຳເຂົ້າ ຫຼື ສະຖານທີ່ລ້ຽງສັດປີກແບບເປັນຟາມ, ແບບເປັນກຸ່ມ, ແບບຄອບຄົວ ທີ່ເຫັນວ່າມີຄວາມສ່ຽງຕໍ່ການລະບາດຂອງພະຍາດໄຂ້ຫວັດສັດປີກ ເພື່ອຊອກຫາສາຍເຫດ ແລະ ລາຍງານໃຫ້ຂັ້ນເທິງຊາບ ຢ່າງຮີບດ່ວນ ທັນເຫດການ.

6. ຫາກພົບເຫັນຜູ້ລະເມີດ ຝ່າຝືນ ຫຼື ລັກລອບນຳເຂົ້າສັດ ແລະ ຜະລິດຕະພັນສັດປີກ ທີ່ບໍ່ຖືກຕ້ອງທີ່ສົງໃສຕິດເຊື້ອ ໃຫ້ສົມທົບກັບພາກສ່ວນກ່ຽວຂ້ອງ ດຳເນີນຄະດີຕາມລະບຽບກົດໝາຍທີ່ໄດ້ວາງອອກ.

7. ເມື່ອໄດ້ຮັບແຈ້ງການສະບັບນີ້ແລ້ວ ຈົ່ງພ້ອມກັນນຳໄປຈັດຕັ້ງປະຕິບັດ ດ້ວນຄວາມຮັບຜິດຊອບສູງ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຈັດຕັ້ງປະຕິບັດ ດ້ວຍຄວາມຮັບຜິດຊອບສູງ.

ຫົວໜ້າກົມລ້ຽງສັດ ແລະ ການປະມົງ

<u>ບ່ອນນຳສົ່ງ:</u>

1. ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ (ເພື່ອໃຊ້ຕາງລາຍງານ) 1 ສະບັບ
2. ຫ້ອງການກະຊວງກະສິກຳ ແລະ ປ່າໄມ້ (ເພື່ອໃຊ້ຕາງລາຍງານ) 1 ສະບັບ
3. ພະແນກກະສິກຳ ແລະ ປ່າໄມ້ (ເພື່ອຊ່ວຍຊີ້ນຳການຈັດຕັ້ງປະຕິບັດ) 1 ສະບັບ
4. ກົມ, ກອງ, ສູນ, ສະຖານບັນອ້ອມຂ້າງກະຊວງ ກປ (ເພື່ອຮັບຊາບ) 1 ສະບັບ
5. ພະແນກ, ສູນ ອ້ອມຂ້າງກົມ ( ເພື່ອຈັດຕັ້ງປະຕິບັດ) 1 ສະບັບ
6. ເກັບມ້ຽນ 1 ສະບັບ

ຄຳພາຍ ທຳມະວົງ